ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2024

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານ ຂອງບໍລິສັດ ມະຫະທຶນເຊົ່າສິນເຊື່ອ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມີຖຸນາ 2024, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າຄືການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວບົນພື້ນຖານການທົບທວນຄືນ ຂອງພວກຂ້າພະເຈົ້າ.

ຂອບເຂດ ການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີຫຍັງທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີດັ່ງກ່າວ ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງຢ່າງເປັນສາລະສຳຄັນ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ອະພິສິດ ທ່ຽງຕິງພິນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 8 ສິງຫາ 2024

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	966,604,347,050	904,775,929,399
ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ			
ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ - ສັດສ່ວນໝຸນວຽນ	6	59,256,441,365	63,329,837,434
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	7	109,600,410	155,406,395
ຊັບສິນໝຸນວຽນອື່ນໆ	8	1,684,842,048	1,656,496,861
ລວມຊັບສິນໝຸນວຽນ		**1,027,655,230,873**	**969,917,670,089**
ຊັບສິນບໍ່ໝຸນວຽນ			
ເງິນຝາກຄ້ຳປະກັນເງິນກູ້	9	-	2,000,000,000
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	6	19,370,878,299	22,893,804,241
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	10	674,905,965	719,445,435
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	11	14,889,135	52,921,342
ຊັບສິນບໍ່ໝຸນວຽນ ອື່ນໆ		123,044,510	7,647,059
ລວມຊັບສິນບໍ່ໝຸນວຽນ		**22,183,720,609**	**27,673,820,777**
ລວມຊັບສິນ		**1,049,838,951,482**	**997,591,490,866**

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸກພາພອນ ທອງໄພບຸນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	7,736,821,664	6,968,095,441
ໜີ້ຕ້ອງສົ່ງອາກອນລາຍໄດ້		1,184,230,835	713,016,274
ເງິນກູ້ຢືມໄລຍະສັ້ນ ແລະ ໄລຍະຍາວ (ສັດສ່ວນໝຸນວຽນ)	13	962,256,000,000	908,805,460,751
ໜີ້ສິນໝຸນວຽນອື່ນໆ		52,875,033	50,616,491
ລວມໜີ້ສິນໝຸນວຽນ		**971,229,927,532**	**916,537,188,957**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	13	-	625,359,032
ໜີ້ສິນບໍ່ໝຸນວຽນອື່ນໆ		218,525,000	193,075,000
ລວມໜີ້ສິນບໍ່ໝຸນວຽນ		**218,525,000**	**818,434,032**
ລວມໜີ້ສິນ		**971,448,452,532**	**917,355,622,989**
ທຶນເຈົ້າຂອງ			
ທຶນຈົດທະບຽນ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		5,822,252,913	5,822,252,913
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		19,735,578,487	21,580,947,414
ທຶນເຈົ້າຂອງ		**78,390,498,950**	**80,235,867,877**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**1,049,838,951,482**	**997,591,490,866**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸກພາພອນ ທອງໄພບູນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບຫົກເດືອນສິ້ນສຸດອັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		17,188,528,830	18,227,984,725
ລາຍຮັບອື່ນໆ	15	12,453,330,473	771,044,699
ລວມລາຍຮັບ		**29,641,859,303**	**18,999,029,424**
ລາຍຈ່າຍໃນການບໍລິຫານ	16	(12,470,264,239)	(9,462,432,229)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(1,468,395,343)	(1,001,365,761)
ລາຍຈ່າຍການເງິນ		(9,792,721,519)	(1,690,656,861)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(571,616,294)	(1,545,548,312)
ລວມລາຍຈ່າຍ		**(24,302,997,395)**	**(13,700,003,163)**
ກຳໄລກ່ອນອາກອນ		**5,338,861,908**	**5,299,026,261**
ລາຍຈ່າຍອາກອນລາຍໄດ້	18	(1,184,230,835)	-
ກຳໄລສຸດທິໃນງວດ		**4,154,631,073**	**5,299,026,261**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	19	10.39	13.25

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸภาพอน ทองไพบูน
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

				ກຳໄລສະສົມ		
	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ຈັດສັນ ຄັງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2023		40,000,000,000	12,832,667,550	4,890,597,270	13,196,046,626	70,919,311,446
ກຳໄລໃນງວດ		-	-	-	5,299,026,261	5,299,026,261
ຈ່າຍເງິນປັນຜົນ	17	-	-	-	-	-
ໃນວັນທີ 30 ມິຖຸນາ 2023		**40,000,000,000**	**12,832,667,550**	**4,890,597,270**	**18,495,072,887**	**76,218,337,707**
ໃນວັນທີ 1 ມັງກອນ 2024		40,000,000,000	12,832,667,550	5,822,252,913	21,580,947,414	80,235,867,877
ກຳໄລໃນງວດ		-	-	-	4,154,631,073	4,154,631,073
ຈ່າຍເງິນປັນຜົນ	17	-	-	-	(6,000,000,000)	(6,000,000,000)
ໃນວັນທີ 30 ມິຖຸນາ 2024		**40,000,000,000**	**12,832,667,550**	**5,822,252,913**	**19,735,578,487**	**78,390,498,950**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸภาพอน ทองไพบูน
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		5,338,861,908	5,299,026,261
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ສູນ		221,057,222	162,834,005
ສຳຮອງໜີ້ສິງໄສຈະເສຍ		1,247,338,121	838,531,756
ຄ່າບາຍໜ້າລໍຖ້າຕັດບັນຊີ		537,996,600	1,376,394,852
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		(6,250,000)	7,500,000
ຄ່າຫຼ້ຍຫ້ຽນ	10, 11	182,534,437	198,095,527
ລາຍຈ່າຍການເງິນ		9,792,721,519	1,690,656,861
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		388,090,432	825,502,365
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**17,702,350,239**	**10,398,541,627**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		5,790,025,194	3,645,969,748
ຊັບສິນຖືໄວ້ເພື່ອຂາຍ		52,055,985	(134,323,958)
ຊັບສິນບໍ່ໝຸນວຽນອື່ນໆ		(143,742,638)	(225,886,705)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		879,128,862	585,441,284
ໜີ້ສິນໝຸນວຽນອື່ນໆ		2,047,729	1,045,824
ໜີ້ສິນບໍ່ໝຸນວຽນອື່ນໆ		25,450,000	10,250,000
ເງິນສົດຈາກກິດຈະກຳດຳເນີນງານ		**24,307,315,371**	**14,281,037,820**
ຈ່າຍຄ່າບາຍໜ້າ		(180,800,000)	(464,500,000)
ຈ່າຍດອກເບ້ຍ		(9,903,124,159)	(286,162,015)
ຈ່າຍອາກອນລາຍໄດ້		(713,016,274)	(2,541,872,732)
ເງິນສົດສຸດທິຈາກກິດຈະກຳດຳເນີນງານ		**13,510,374,938**	**10,988,503,073**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸກພາພອນ ທອງໄພບຸນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສົມບັດຄົງທີ່ມີຕົວຕົນ	10	(99,962,760)	(190,759,690)
ຖອນເງິນຝາກຄ້ຳປະກັນເງິນກູ້	9	2,000,000,000	-
ເງິນສົດສຸດທິຮັບຈາກ/(ໃຊ້ໄປໃນ)ກິດຈະກຳການລົງທຶນ		**1,900,037,240**	**(190,759,690)**
ກະແສເງິນສົດຈາກກິດຈະກຳການເງິນ			
ຮັບຈາກເງິນກູ້ຢືມ	13	-	5,628,240,000
ຈ່າຍຄືນເງິນກູ້ຢືມ	13	(2,391,219,783)	(22,819,118,655)
ຈ່າຍເງິນປັນຜົນ	17	(6,000,000,000)	-
ເງິນສົດສຸດທິໃຊ້ໄປໃນກິດຈະກຳການເງິນ		**(8,391,219,783)**	**(17,190,878,655)**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**7,019,192,395**	**(6,393,135,272)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ		904,775,929,399	6,679,159,473
ກຳໄລຈາກອັດຕາແລກປ່ຽນ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		54,809,225,256	32,637,136
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	5	**966,604,347,050**	**318,661,337**

ທ່ານ ມານົບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 8 ສິງຫາ 2024

ທ່ານ ນາງ ສຸກພາພອນ ທອງໄພບູນ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 8 ສິງຫາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຈົດທະບຽນສ້າງຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດ ໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ ລົດຈັກ, ລົດໄຖ ແລະ ຄຳ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍສະພາຜູ້ບໍລິຫານໃນວັນທີ 8 ສິງຫາ 2024.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄຸ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2023.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ໃຊ້ດຸນພິນິດທີ່ເປັນສາລະສຳຄັນໂດຍປະອີງຕາມນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2023.

4 ການຈຳແນກປະເພດ

ມີຕົວເລກບາງລາຍການໄດ້ມີການຈັດໝວດຄືນໃໝ່ເພື່ອໃຫ້ສອດຄ່ອງກັບການນຳສະເໜີບົດລາຍງານການເງິນໃນປີປັດຈຸບັນ, ເຊິ່ງການຈັດໝວດຄືນໃໝ່ເຫຼົ່ານີ້ບໍ່ໄດ້ມີຜົນກະທົບຕໍ່ບົດລາຍງານການເງິນທີ່ໄດ້ລາຍງານຜ່ານມາ ໂດຍໄດ້ຈັດໝວດໃບລາຍງານຜົນໄດ້ຮັບ ນະວັນທີ 30 ມິຖຸນາ 2023 ເພື່ອນຳສະເໜີໃບລາຍງານຜົນໄດ້ຮັບໃນຮູບແບບໃບລາຍງານດຽວ.

5 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ເງິນສົດໃນມື	15,939,939	38,921,900
ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ເມື່ອຕ້ອງການ	13,188,407,111	5,937,007,499
ເງິນຝາກມີກຳນົດ	953,400,000,000	898,800,000,000
ລວມ	**966,604,347,050**	**904,775,929,399**

6 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	888,806,620	1,087,689,299
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	66,761,369,609	69,127,826,376
	67,650,176,229	**70,215,515,675**
ເພີ່ມ ຕົ້ນທຶນທາງກົງ	311,942,217	521,345,223
ຫັກ ສຳຮອງໜີ້ສົງໄສຈະເສຍ	(8,705,677,081)	(7,407,023,464)
	59,256,441,365	**63,329,837,434**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	53,293,420	168,286,430
ລູກໜີ້ສິນເຊື່ອຜ່ອນຊຳລະ	19,383,032,502	22,694,487,334
	19,436,325,922	**22,862,773,764**
ເພີ່ມ ຕົ້ນທຶນທາງກົງ	178,309,804	326,103,399
ຫັກ ສຳຮອງໜີ້ສົງໄສຈະເສຍ	(243,757,427)	(295,072,922)
	19,370,878,299	**22,893,804,241**
ລວມ	**78,627,319,664**	**86,223,641,675**

6 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ມິຖຸນາ 2024, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ບໍ່ຄົບກຳນົດ	66,308,703,980	73,759,785,934
1 – 3 ເດືອນ	10,098,907,148	10,186,010,761
4 – 6 ເດືອນ	1,703,878,386	1,498,171,269
7 – 12 ເດືອນ	1,945,487,282	1,755,817,947
ເກີນ 12 ເດືອນ	7,029,525,355	5,878,503,528
	87,086,502,151	**93,078,289,439**
ເພີ່ມ ຕົ້ນທຶນທາງກົງ	490,252,021	847,448,622
ຫັກ ສຳຮອງໜີ້ສົງໄສຈະເສຍ	(8,949,434,508)	(7,702,096,386)
ລວມ	**78,627,319,664**	**86,223,641,675**

7 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ລິດຈັກ	115,850,410	167,906,395
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(6,250,000)	(12,500,000)
ລວມ	**109,600,410**	**155,406,395**

8 ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງຮັບຈາກດອກເບ້ຍຈາກເງິນຝາກທະນາຄານ	848,917,800	812,198,623
ຄ່າໃຊ້ຈ່າຍລ່ວງໜ້າ	481,747,286	742,151,185
ຈ່າຍເງິນລ່ວງໜ້າ	132,726,000	28,776,000
ອື່ນໆ	221,450,962	73,371,053
ລວມ	**1,684,842,048**	**1,656,496,861**

9 ເງິນຝາກຄ້ຳປະກັນເງິນກູ້

ເງິນຝາກຄ້ຳປະກັນເງິນກູ້ແມ່ນເງິນທີ່ບໍ່ສາມາດນຳໃຊ້ໄດ້ ເຊິ່ງລວມມີບັນຊີເງິນຝາກມີກຳນົດ 1,500 ລ້ານກີບ ແລະ ບັນຊີກະແສລາຍວັນທີ່ຕ້ອງມີເງິນຂັ້ນຕ່ຳ 500 ລ້ານກີບ ທີ່ໃຊ້ເປັນເງິນຄ້ຳປະກັນສຳລັບການກູ້ຢືມນຳທະນາຄານທຸລະກິດພາຍໃນປະເທດຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 13). ເງິນກູ້ຢືມດັ່ງກ່າວແມ່ນໄດ້ຊຳລະເຕັມຈຳນວນທັງໝົດໃນວັນທີ 13 ມີນາ 2024 ແລະ ເງິນຝາກຄ້ຳປະກັນເງິນກູ້ແມ່ນໄດ້ຖອນມາເປັນເງິນສົດ ແລະ ລາຍການທຽບເທົ່າເງິນສົດ.

10 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2024 – ກວດສອບ	719,445,435
ເພີ່ມຂຶ້ນ	99,962,760
ຫັກ: ຄ່າຫຼ້ຽຫ້ຽນ	(144,502,230)
ມູນຄ່າສຸດທິຕາມບັນຊີ ໃນວັນທີ 30 ມິຖຸນາ 2024 – ທົບທວນຄືນ	**674,905,965**

11 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2024 – ກວດສອບ	52,921,342
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(38,032,207)
ມູນຄ່າສຸດທິຕາມບັນຊີ ໃນວັນທີ 30 ມິຖຸນາ 2024 – ທົບທວນຄືນ	**14,889,135**

12 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ລາຍຈ່າຍຄ້າງຈ່າຍ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 20)	4,650,071,248	4,760,473,887
ລາຍຈ່າຍຄ້າງຈ່າຍ	1,893,314,202	2,011,288,365
ໜີ້ຕ້ອງສົ່ງການຄ້າ	1,049,336,000	98,668,000
ໜີ້ຕ້ອງສົ່ງອາກອນອື່ນໆ	144,100,214	97,665,189
ລວມ	**7,736,821,664**	**6,968,095,441**

13 ເງິນກູ້ຢືມ

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໝຸນວຽນ	962,256,000,000	908,805,460,751
ບໍ່ໝຸນວຽນ	-	625,359,032
ລວມ	**962,256,000,000**	**909,430,819,783**

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2024 ມີດັ່ງລຸ່ມນີ້:

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	909,430,819,783	31,759,351,297
ເງິນກູ້ຢືມທີ່ເພີ່ມ	-	828,828,240,000
ຊຳລະເງິນກູ້ຢືມຄືນ	(2,391,219,783)	(20,661,971,514)
ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ	55,216,400,000	69,505,200,000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**962,256,000,000**	**909,430,819,783**

ບໍລິສັດໄດ້ລົງນາມເຊັນສັນຍາເງິນກູ້ໄລຍະຍາວກັບສະຖາບັນການເງິນໃນເດືອນ ກຸມພາ 2020 ຈຳນວນ 3 ລ້ານໂດລ່າ ໂດຍມີອັດຕາດອກເບ້ຍ 1.2% ຕໍ່ປີ ແລະ ໄລຍະການຊຳລະເງິນກູ້ຢືມແມ່ນ 3 ປີຈາກມື້ກູ້ຢືມ. ການກູ້ຢືມແມ່ນໄດ້ຮັບການຄ້ຳປະກັນຈາກຜູ້ຖືຫຸ້ນ.

ໃນວັນທີ 30 ມິຖຸນາ 2024 ຍອດເງິນກູ້ແມ່ນມີຈຳນວນ 400,000 ໂດລ່າ ຫຼື ທຽບເທົ່າ 8,856 ລ້ານກີບ

ໃນວັນທີ 31 ມີນາ 2022, ບໍລິສັດໄດ້ລົງນາມສັນຍາເງິນກູ້ກັບທະນາຄານພາຍໃນປະເທດ ໃນວົງເງິນ 5 ຕື້ກີບ, ເປັນໄລຍະເວລາ 3 ປີ ແລະ ດອກເບ້ຍ 9% ຕໍ່ປີ, ດອກເບ້ຍ ແລະ ເງິນຕົ້ນແມ່ນຊຳລະເປັນລາຍເດືອນ, ເລີ່ມແຕ່ວັນທີ 8 ພຶດສະພາ 2022 ຫາ 8 ເມສາ 2025. ການຄ້ຳປະກັນເງິນກູ້ຢືມ ແມ່ນຕ້ອງມີເງິນຝາກມີກຳນົດ ແລະ ເງິນຝາກກະແສລາຍວັນ ຕາມຍອດເງິນທີ່ລະບຸໃວ້ໃນສັນຍາເງິນກູ້ (ບົດອະທິບາຍ 9). ເງິນກູ້ຢືມແມ່ນໄດ້ຊຳລະເຕັມຈຳນວນແລ້ວໃນວັນທີ 13 ມີນາ 2024.

ວັນທີ 27 ມີນາ 2023, ບໍລິສັດໄດ້ລົງນາມສັນຍາເງິນກູ້ຢືມກັບຜູ້ຖືຮຸ້ນ (ບໍລິສັດມະຫາທຸນ ໂຮນດິງ ຈຳກັດ) ຈຳນວນ 240,000 ໂດລາ ຫຼື ທຽບເທົ່າ 4,068 ລ້ານກີບ ກຳນົດເວລາ 3 ເດືອນ ແລະ ດອກເບ້ຍ 13% ຕໍ່ປີ. ເງິນກູ້ຢືມແມ່ນໄດ້ຊຳລະເຕັມຈຳນວນແລ້ວໃນວັນທີ 29 ກັນຍາ 2023

ວັນທີ 30 ພຶດສະພາ 2023 ບໍລິສັດໄດ້ລົງນາມສັນຍາເງິນກູ້ຢືມ 1 ເດືອນກັບພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 3 ລ້ານບາດ ຫຼື ທຽບເທົ່າ 1,560 ລ້ານກີບ ກຳນົດໄລຍະເວລາ 1 ເດືອນ ແລະ ດອກເບ້ຍ 15% ຕໍ່ປີ ເຊິ່ງໄດ້ຊຳລະຄືນທັງໝົດໃນວັນທີ 29 ມິຖຸນາ 2023.

ບໍລິສັດໄດ້ລົງນາມເຊັນສັນຍາເງິນກູ້ກັບພາກສ່ວນທີ່ກ່ຽວຂ້ອງໃນເດືອນ ກັນຍາ 2023 ຈຳນວນ 1,500 ລ້ານບາດ ເປັນໄລຍະເວລາ 1 ປີພ້ອມດ້ວຍອັດຕາດອກເບ້ຍ 2% ຕໍ່ປີ , ການຊຳລະດອກເບ້ຍແມ່ນຊຳລະເປັນລາຍເດືອນ ເລີ່ມແຕ່ວັນທີ 20 ກັນຍາ 2023 ຫາ 19 ກັນຍາ 2024 (ບົດອະທິບາຍ 20). ໃນວັນທີ 30 ມິຖຸນາ 2024 ຍອດເງິນກູ້ແມ່ນມີຈຳນວນ 1,400 ລ້ານບາດ ຫຼື ທຽບເທົ່າ 953,400 ລ້ານກີບ.

14 ການຂາດທຶນຈາກການຕີມູນຄ່າຕາມອັດຕາແລກປ່ຽນເງິນຕາຕ່າງປະເທດ

ໃນລະຫວ່າງປີ, ເງິນກີບລາວໄດ້ອ່ອນຄ່າລົງເມື່ອທຽບກັບສະກຸນເງິນໂດລ່າ ແລະ ເງິນບາດ ຈຶ່ງເປັນສາເຫດເຮັດໃຫ້ເກີດການຂາດທຶນ ຈາກການຕີມູນຄ່າອັດຕາແລກປ່ຽນ ຂອງການກູ້ຢືມເງິນໂດລ່າ ແລະ ເງິນບາດ (ບົດອະທິບາຍ 13)

15 ລາຍຮັບອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ	11,483,675,121	113,609,449
ການປັບໄໝ - ລູກຄ້າ	878,886,345	639,851,515
ອື່ນໆ	90,769,007	17,583,735
ລວມ	**12,453,330,473**	**771,044,699**

16 ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານປະກອບມີລາຍການດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ຄ່າໃຊ້ຈ່າຍທີ່ກ່ຽວກັບພະນັກງານ	7,398,509,511	5,504,358,197
ຄ່າໃຊ້ຈ່າຍອາກອນອື່ນໆ	940,669,580	28,562,873
ຄ່າໃຊ້ຈ່າຍທີ່ກ່ຽວກັບການໂຄສະນາ	623,503,399	1,126,387,761
ຄ່າໃຊ້ຈ່າຍອື່ນໆ	689,863,198	427,041,273
ຄ່າບໍລິການກວດສອບ ແລະ ກົດໝາຍ	574,853,480	452,588,700
ຄ່າຕອບແທນຜູ້ບໍລິຫານ	479,500,000	597,508,999
ຄ່າໃຊ້ຈ່າຍໃນການເດີນທາງ	570,327,761	418,311,204
ຄ່າເຊົ່າ	385,738,029	320,955,937
ຄ່າທຳນຽມອື່ນໆຂອງທະນາຄານ	331,119,160	175,944,260
ຄ່າຫຼ້ຍຫ້ຽນ	182,534,438	198,095,527
ຄ່າໃຊ້ຈ່າຍອຸປະກອນຫ້ອງການ	176,428,353	106,036,539
ລາຍຈ່າຍສາທາລະນຸປະໂພກ	117,217,330	106,640,959
	12,470,264,239	**9,462,432,229**

17 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 25 ເມສາ 2023, ຜູ້ຖືຮຸ້ນບໍ່ອະນຸມັດໃຫ້ມີການຈ່າຍເງິນຜົນປະຈຳປີ ຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2022 ເນື່ອງຈາກບໍລິສັດ ສະຫງວນກະແສເງິນສົດ ເພື່ອຊຳລະເງິນກູ້ ທີ່ຈະຮອດກຳນົດຊຳລະພາຍໃນ 6 ເດືອນຕໍ່ໜ້າ ແລະ ເພື່ອສະໜັບສະໜຸນການຂະຫຍາຍທຸລະກິດໃນປີງົບປະມານ 2023.

ໃນກອງປະຊຸມຜູ້ຖືຫຸ້ນສາມັນ ປະຈຳປີ 2023 ໃນວັນທີ 25 ເມສາ 2024, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີ ຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2023 ໃນມູນຄ່າ 15 ກີບຕໍ່ຮຸ້ນ, ລວມມູນຄ່າທັງໝົດ 6,000 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 931 ລ້ານ ກີບ.

18 ການຈ່າຍອາກອນລາຍໄດ້

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສົ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

ການກະທົບຍອດລະຫວ່າງ ລາຍຈ່າຍອາກອນ ແລະ ກຳໄລທາງບັນຊີ ສຳລັບປີການບັນຊີ ມີດັ່ງນີ້:

	ກີບ
ກຳໄລກ່ອນອາກອນ - ການບັນຊີ	
ຜົນກະທົບດ້ານອາກອນ:	5,338,861,908
ລາຍຈ່າຍອາກອນອື່ນໆ	200,451,837
ເກັບຄືນເງິນແຮຈາກການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(6,250,000)
ກຳໄລສຸດທິຈາກຕີມູນຄ່າອັດຕາແລກປ່ຽນ	388,090,429
ລາຍຮັບທີ່ຕ້ອງເສຍອາກອນ:	**5,921,154,174**
ອັດຕາອາກອນກຳໄລ 20%	1,184,230,835

19 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນ ຂອງຮຸ້ນສາມັນ ທີ່ມີທັງໝົດ ດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ)	4,154,631,073	5,299,026,261
ຈຳນວນຮຸ້ນສາມັນ (ຮຸ້ນ)	400,000,000	400,000,000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	10.39	13.25

20 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບຫົກເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2024 ມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ລາຍຈ່າຍອື່ນໆ		
ພາກສ່ວນທີ່ກ່ຽວຂ້ອງ - ລາຍຈ່າຍດອກເບ້ຍ	9,180,778,105	-
ຜູ້ຖືຫຸ້ນ - ລາຍຈ່າຍດອກເບ້ຍ	-	148,213,881
ຜູ້ຖືຫຸ້ນ - ຄ່າຄ້ຳປະກັນ	524,771,097	1,220,577,988
ລວມ	**9,705,549,202**	**1,368,791,869**

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງສົ່ງ:		
ພາກສ່ວນກ່ຽວຂ້ອງ - ດອກເບ້ຍທີ່ຕ້ອງຈ່າຍ (ບົດອະທິບາຍ 12)	4,650,071,248	4,760,473,887
ເງິນກູ້ຢືມໄລຍະສັ້ນ:		
ພາກສ່ວນກ່ຽວຂ້ອງ (ບົດອະທິບາຍ 13)	953,400,000,000	898,800,000,000

ຄ. ຄ່າຕອບແທນຜູ້ບໍລິຫານ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ຜົນປະໂຫຍດໄລຍະສັ້ນ (ບົດອະທິບາຍ 16)	479,500,000	597,508,999

21 ພາລະຜູກພັນ

ບໍລິສັດມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ພາຍໃນ 1 ປີ	295,161,585	271,332,895
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	946,682,705	1,296,595,944
ລວມ	**1,241,844,290**	**1,567,928,839**

22 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນພາຍຫຼັງວັນທີຂອງບົດລາຍງານຖານະການເງິນ ທີ່ມີຜົນກະທົບຕໍ່ຕົວເລກໃນບົດລາຍງານການເງິນກາງປີຂອງບໍລິສັດ.